*ເງິນທຶນການ ປິ່ນປົວລະຍະຍາວ ສໍາລັບທຸກໆຄົນ.*

## WA Cares Fund ແມ່ນຫຍັງ?

WA Cares ເປັນເງິນທຶນໃຫມ່ຊຶ່ງພວກເຮົາຫມົດທຸກຄົນແບ່ງບໍຣິຈາກໃສ່ເມື່ອເວລາພວກເຮົາເຮັດວຽກຢູ່. ຈາກເງິນອັນນພວກເຮົາສາມາດເຂົ້າເຖິງການປິ່ນປົວລະຍະຍາວເມື່ອເວລາພວກເຮົາຕ້ອງການ ມັນ.

## WA Cares ທໍາງານຢ່າງໃດ?

### *ສະວັດດີການ*

ທ່ານສາມາດໄດ້ຮັບການບໍຣິການແລະການອູ້ມຊູທີ່ມີມູນຄ່າສູງເຖິງ $36,500 (ຖຶກດັດແປງແຕ່ລະປີສູງເຖິງຄ່າເງິນເຟີ້)ຕະລອດຊີວິດຂອງທ່ານ.ທ່ານເລືອກເອົາວ່າຈະໃຊ້ສະວັດດີການຂອງທ່ານແນວໃດ – ຕົວຢ່າງວ່າ, ທ່ານສາມາດຈ້າງເອົາຜູ້ຊ່ວຍເບິ່ງແຍງດູແລຢູ່ເຮືອນ,ຈ່າຍເງິນໃຫ້ສະມາຊິກຄອບຄົວ,ທໍາການດັດແປງຮູບຮ່າງຂອງເຮືອນ, ຫລືຮັບເອົາການປິ່ນປົວຢູ່ໃນສະພາບແວດລ້ອມແບບບ່ອນຢູ່ອາສັຍຫລືເຮືອນລ້ຽງຜູ້ເຖົ້າ.ທຸກໆຄົນຜູ້ທີ່ຕ້ອງການຄວາມຊ່ວຍເຫລືອນໍາກິຈກັມຂອງການດໍາຣົງຊີວິດປະຈໍາວັນຢ່າງຫນ້ອຍສາມຢ່າງ,ເຊັ່ນວ່າການກິນ,ການອາບນໍ້າ,ຫລື ການເຂົ້າຫ້ອງນໍ້າ, ຜູ້ທີ່ໄດ້ສອດຄ່ອງນໍາກົດເກນການລົງທຶນຢູ່ຂ້າງລຸ່ມນີ້ຈະມີເງື່ອນໄຂໄດ້ຮັບ.

### *ການແບ່ງບໍຣິຈາກ*

WA Cares ຖຶກອອກທຶນໃຫ້ໂດຍທັງຫມົດໂດຍການແບ່ງບໍຣິຈາກຂອງພະນັກງານ.ຄ່າທໍານຽມແມ່ນ 0.58% (ເງິນເດືອນຂອງທ່ານ x 0.0058). ສໍາລັບເງິນຫາມາໄດ້ຂອງພະນັກງານທົ່ວໄປ $52,075, ມັນຈະແມ່ນ $302/ ປີ.ເພື່ອຈະໄດ້ສະວັດດີການ, ທ່ານຕ້ອງໄດ້ແບ່ງບໍຣິຈາກຢ່າງຫນ້ອຍ 10 ປີ(ໂດຍປາສຈາກຊ່ວງວ່າງ 5 ປີຫລື ຫລາຍກວ່າ)ຫລືໄດ້ແບ່ງບໍຣິຈາກ 3 ປີຂອງ 6 ປີ ຜ່ານມາໃນເວລາຂອງຄໍາຮ້ອງຂໍເອົາການຊ່ວຍເຫລືອ.

## ພວກເຮົາໄດ້ຄູ້ມກັນນີ້ອື່ນແລ້ວ

### ປ້ອງກັນເງິນອອມສິນເບັ້ຽບໍານານຂອງທ່ານ



ພວກເຮົາ7 ຄົນຢູ່ໃນ10 ຄົນຈະຕ້ອງການການ ປິ່ນປົວລະຍະຍາວ. Medicare ບໍ່ຈ່າຍໃຫ້. ດ້ວຍ WA Cares, ພວກເຮົາສ່ວນຫລາຍຈະບໍ່ຕ້ອງໄດ້ລຸດເງິນອອມສິນຂອງຊີວິດຂອງພວກເຮົາ ລົງຕໍ່ໄປອີກແລ້ວເພື່ອຈະໄດ້ຮັບການປິ່ນປົວ.

ພະນັກງານຜູ້ທີ່ບໍ່ປະສົງຢາກຈະເຂົ້າຮ່ວມນໍາໃນ WA Cares ຈະຕ້ອງໄດ້ຊື້ເອົາປະກັນພັຍເອກຊົນ.ຄ່າທໍານຽມເອກຊົນສາມາດແພງຫລາຍກວ່າຫລາຍແລະຖຶກຕິດຫນີ້ໄວ້ຈົນຮອດມື້ທີ່ທ່ານເສັຽຊີວິດຫລືຕ້ອງການການປິ່ນປົວແລະຍາກທີ່ຈະຈ່າຍໄດ້ດ້ວຍຣາຍໄດ້ຕາຍໂຕ. WA Cares ສະເນີການຄູ້ມກັນໃນຣາຄາຍ່ອມເຍົາໃຫ້,ແລະທ່ານຈະຢຸດແບ່ງບໍຣິຈາກໃນວັນທີ່ທ່ານອອກເບັ້ຽບໍານານ.ເມື່ອເວລາປຽບທຽບຄ່າຣາຄາ,ປຽບທຽບໃສ່ຕະລອດຊີວິດ – ບໍ່ແມ່ນເປັນປີ – ຣາຄາ.

### ປົກປ້ອງຄອບຄົວຂອງທ່ານ



ພວກເຮົາສ່ວນຫລາຍບໍ່ສາມາດກູ້ມຄ່າປິ່ນປົວລະຍະຍາວເມື່ອເວລາພວກເຮົາຕ້ອງການມັນ. ຄົນຮັກຂອງພວກເຮົາຈົບລົງຢູ່ທີ່ຈະຕ້ອງໄດ້ຈ່າຍ – ຫລື – ເອົາໃຫ້ – ການປິ່ນປົວທີ່ພວກເຮົາຕ້ອງການ.

ຜູ້ເບິ່ງແຍງດູແລຈາກຄອບຄົວຈະຕ້ອງໄດ້ລຸດຊົ່ວໂມງເຮັດວຽກລົງສະເມີ,ບໍ່ຮັບເອົາການເລື່ອນຊັ້ນ,ຫລືອອກຈາກວຽກ,ເສັຽສະລະຄວາມປອດພັຍທາງການເງິນແລະເບັ້ຽບໍານານຂອງເຂົາເຈົ້າເອງ.ດ້ວຍ WA Cares, ທ່ານແລະຄອບຄົວຂອງທ່ານຈະມີເງິນເພື່ອຈະຈ້າງເອົາຜູ້ເບິ່ງແຍງດູແລຜູ້ຊ່ຽວຊານຖ້າຫາກວ່າທ່ານປະສົງ,ຫລືຄົນທີ່ທ່ານຮັກສາມາດເປັນຜູ້ເບິ່ງແຍງດູແລທີ່ຖຶກຈ່າຍເງິນໃຫ້.

### ວັນທີກູນແຈສໍາຄັນ

***ເດືອນອົກໂຕເບີ 1, 2021 – ເດືອນດີເຊັມເບີ 31, 2022***

ປ່ອງເວລາເພື່ອຈະຮ້ອງຂໍເອົາການຍົກເວັ້ນໃນການຄູ້ມກັນ.

**ເດືອນອົກໂຕເບີ 31, 2021**

ເສັ້ນເວລາຕາຍໂຕສໍາລັບການມີປະກັນພັຍເອກຊົນເພື່ອຈະມີສິດໄດ້ຮັບການຍົກເວັ້ນຕະລອດຊີວິດ.

**ເດືອນແຈນຢູຣີ 1, 2022**

ຄ່າທໍານຽມເລີ້ມຕົ້ນສໍາລັບພະນັກງານ.ຜູ້ທີ່ເຮັດວຽກໃຫ້ຕົນເອງສາມາດເລືອກເຂົ້າຫາການຄູ້ມກັນໄດ້.

**ເດືອນແຈນຢູຣີ 1, 2025**

ສະວັດດີການຈະມີໄວ້ໃຫ້ບຸກຄົນຜູ້ທີ່ມີຄຸນນະວຸດທິ,ມີເງື່ອນໄຂໄດ້ຮັບ.

### ຮຽນຮູ້ເພີ້ມເຕີມ

ແວ່ປ້ຽມ wacaresfund.wa.gov ແລະໄດ້ຄໍາຕອບຕໍ່ຄໍາຖາມຂອງທ່ານໄດ້ທີ່ wacaresfund.wa.gov/learn-more

ເຂົ້າຮ່ວມນໍາແວບບິນາສົດ.ເວລາຈັດໃສ່ຈະຖຶກເຮັດທຸກໆອາທິດ.ເບິ່ງວັນທີໄດ້ທີ່ wacaresfund.wa.gov/learn-more

Washington State Department of Social & Health Services

*Transforming lives*